ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ລກ/ປພຖຊ/໐໗໔ກ໑໐**

# ຖແລງການ

## ກຸ່ມພາຄີ 15 ປະເທດ ເລັ່ງ ພັກຣັດ ແກ້ໄຂບັນຫາລາວ.

ຍ້ອນວ່າ ພັກຣັດ ສປປລາວ. ໄດ້ຮັບເງື່ອນໄຂສ້າງຄວາມສາມະຄີປອງດອງຊາດ ກັບພວກເຮົາ ປະຊາຊົນ ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື"**ປະຊາຊົນລາວທັງຊາດ**" ຕາມແນວທາງສັນຕິວິທີ ຈາກກຸ່ມພາຄີ 15 ປະເທດມາແລ້ວ!... ແຕ່ບໍ່ປະຕິບັດ ໃຫ້ເປັນຮູບພຣະທັມ; ມີແຕ່ ຫລົບຫລີກ ແກ້ຕົວມາ ໂດຍຕລອດ!.

ສັ້ນ, ກຸ່ມພາຄີ 15 ປະເທດເພື່ອນມິດ ໃນທົ່ວໂລກ ມີຄວາມເຫັນອົກເຫັນໃຈ ປະຊາຊົນລາວ ທີ່ຖືກ ຕັດສິດທິເສຣີພາບ ມາເປັນເວລາດົນນານແລ້ວ, ຈຶ່ງເລັ່ງທວງ ບີບຣັດພັກຣັດ ໃຫ້ແກ້ໄຂໂດຍໄວ! ກ່ອນທີ່ ສະຖານະການໂລກຈະປ່ຽນແປງ. ພັກຣັດ ຕ້ອງຢຸດຕິເອບອ້າງ ເອົາການ ຊາດງົບປະມານ, **ຊາດບຸຄລາກອນ ທີ່ມີຄຸນພາບ ແລະຊາດອຸປກອນ ພາຫະນະ ຮັບໃຊ້** ມາເປັນຂໍ້ອ້າງ ເພື່ອຈອບອອຍ ຂໍການຊ່ວຍເຫລືອລ້າ ແລະ ເພື່ອຫັນເຫຄວາມສົນໃຈ ຂອງປະຊາຊົນລາວແລະປະຊາຊົນໂລກໄປທາງອື່ນ; ບໍ່ໃຫ້ສົນໃຈ ນຳການແກ້ໄຂບັນຫາ ລາວ. ຕາມຄວາມເປັນຈິງແລ້ວ, ບັນຫາລາວ ບໍ່ຄວນຈະແກ່ຍາວ ມາເຖິງປານນີ້. ມັນຄວນໄດ້ຮັບການ ແກ້ໄຂກັນ ມາແຕ່ດົນນານແລ້ວ. ຖ້າພັກຣັດມີຄວາມກ້າຫານ ມີຄວາມຈິງໃຈ ແລະເຫັນແກ່ຄວາມເປັນເອກຣາດ ຂອງຊາດຕົນແລ້ວ ກໍຕ້ອງປະຕິບັດຕາມເງື່ອນໄຂ ທີ່ຕົນໄດ້ຮັບຈາກ ກຸ່ມພາຄີ 15 ປະເທດນັ້ນ, ໃຫ້ສຳເຣັດລົງ ໂດຍໄວ ຢ່າງຈົບງາມ.

ພວກເຮົາ ຂໍສແດງຄວາມ ຂອບອົກຂອບໃຈ ເປັນຢ່າງຍິ່ງ ນຳກຸ່ມພາຄີ 15 ປະເທດເພື່ອນມິດທົ່ວໂລກ ທີ່ບີບຣັດພັກຣັດ ໃຫ້ອອກມາແກ້ໄຂ ບັນຫາຊາດຮ່ວມກັນ ກັບພວກເຮົາໂດຍໄວ...ກ່ອນທີ່ເຫດການຈະປ່ຽນແປງໄປ

ໃນທາງທີ່ ບໍ່ເພິ່ງປາຖນາ. ພວກເຮົາ ຂໍໃຫ້ຄວາມປາຖນາດີ ຂອງບັນດາ ທ່ານທັງຫລາຍທີ່ຢາກໃຫ້ພົລເມືອງລາວ ໄດ້ພົບກັບອິສຣະພາບອັນແທ້ຈິງ ແລະສັນຕິສຸຂອັນຍາວນານນັ້ນ ຈົ່ງເກີດມີຂື້ນ ໂດຍໄວດ້ວຍເຖີ້ນ.

ການຕໍ່ສູ້ຂອງພວກເຮົາ ປະຊາຊົນພັກ ແລະ ກໍາລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ໄດ້ມີຮາກຖານແນວຄວາມຄິດຮັກຊາດ ເອກຣາດ ເສັຽສລະ ກ້າຫານ ມາຈາກວິຣະບຸຣຸສຂອງລາວ ຄື ສົມເດັດ ເຈົ້າເພັຊຣາດ ທີ່ໄດ້ນໍາພາ ຂບວນການຕໍ່ສູ້ ຂອງລາວອິສຣະໃນອາດີດ ເພື່ອສ້າງຄວາມສາມະຄີ ເຕົ້າໂຮມຄົນລາວ ໃຫ້ເປັນອັນນຶ່ງອັນດຽວກັນ.

ດັ່ງນັ້ນ, ພວກເຮົາ ຈິ່ງໄດ້ຍຶດໝັ້ນ ຢ່າງເດັດດ່ຽວໜຽວແໜ້ນ ໃນການແກ້ໄຂບັນຫາລາວຢ່າງສັນຕິ. ພວກເຮົາບໍ່ໄດ້ຖືວ່າ ຄນະພັກຣັດ ຫລືບຸກຄົນໃດບຸກຄົນນຶ່ງ ໃນຄນະຣັຖບານຂອງພວກທ່ານ ເປັນສັຕຣູ ຂອງພວກເຮົາ. ເພາະສັຕຣູ ຂອງພວກເຮົານັ້ນ, ແມ່ນຄວາມຫລ້າຫລັງຂອງປະເທດຊາດ; ປະຊາຊົນ ຂາດສິດທິເສຣີພາບ ແລະບໍ່ມີໂອກາດເທົ້າທຽມກັນ ໃນການສ້າງສາທໍາມາຫາກິນ.

ພວກເຮົາ ເຄີຍໄດ້ຮັບຮູ້ ຜົນງານອັນດີເລີດຂອງພວກທ່ານຫລາຍຢ່າງ ທີ່ເປັນປໂຍດແກ່ປະເທດຊາດ ແລະປະຊາຊົນ. ບໍ່ວ່າຍາມໃດ, ພວກເຮົາ ກໍໄດ້ຮຽກຮ້ອງໃຫ້ພັກຣັດ ອອກມາໂອ້ລົມກັບພວກເຮົາປະຊາຊົນພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ ເພື່ອຊອກຊ່ອງທາງ ແກ້ໄຂບັນຫາຊາດ ຮ່ວມກັນ ດ້ວຍຄວາມຈິງໃຈ, ແກ້ໄຂຂໍ້ບົກພ່ອງ ແລະອຸປສັກຕ່າງໆ ທີ່ຂັດຂວາງ ການໂຮມລາວສອງຝ່າຍ ໃຫ້ເກີດຂື້ນຕາມຄວາມຮຽກຮ້ອງຕ້ອງການ ຂອງຊາດຂອງປະຊາຊົນ ແລະຂອງສາກົນ. ເຮັດໃຫ້ລາວລວມລາວ ຄັ້ງຍິ່ງໃຫຍ່ ໃນປວັດສາດນີ້ ເປັນໄຊຊນະລວມ ແລະໝັ້ນຄົງຖາວອນ ຂອງປະຊາຊົນລາວທັງຊາດ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.

ຂໍຂອບໃຈ

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໒໗ ມິຖຸນາ ໒໐໑໐.**